# Sodium Chloride 0.9

**Generic name:** Sodium Chloride Injection
**Brand Name:** Sodium Chloride 0.9
**Composition:**
Sodium chloride........................................................100ml : 0.9g
**Indications:**

- Sodium Chloride 0.9% injection is used to replenish fluids and electrolytes, especially when these are lost due to dehydration, vomiting, diarrhea, or excessive sweating.
- It acts as a carrier fluid for administering other medications intravenously, ensuring proper dilution and distribution.
- Used to clean nasal passages, and eye and Wash the external wound etc.

**Dosage:**
**Intravenous (IV) Fluid Replacement / Hydration**
Used for dehydration, electrolyte loss

- **Adults:**
  - Initial dose: 500 mL to 1000 mL IV infusion.
  - Maintenance: Typically, 1.5 to 3 liters/day, depending on fluid needs.
- **Children:**
  - Maintenance fluid: Approx. 100 mL/kg/day (divided over 24 hours).
  - Adjust according to age, weight, and clinical status.
- **As a Diluent or Carrier for IV Medications**
  - Amount varies depending on the medication.
  - Usually, 50 mL to 250 mL used to dilute drugs like antibiotics, chemotherapy, etc.
- **Nasal Irrigation**
  - Used for clearing nasal passages in colds or allergies.
- **Eye wash:**
  - 1–2 drops as needed or irrigate gently for a few minutes with continuous flow.
- **Wound Cleaning Used externally**:
  - Wound irrigation: Use as needed to flush the wound no strict dosage (e.g., 50–100 mL or more).

**Contraindications:**

- None.

**Warning:**

- Use with caution in patients with edematous diseases, hypertension, and hypokalemia.

**Adverse Effects:**

- Too much and too fast infusion can lead to water and sodium retention, edema, high blood pressure, fast heart rate, chest tightness, dyspnea, and even acute left heart failure.

**Dosage form:** This product is Injection, colourless clear liquid.
**Expiry date:** 36 months from the date of manufacture.
**Packaging:** 100ml/Bag, 40 Bags/Box.
**Storage:**

- Sealed, stored at no more than 30 ℃.

**Manufactured by:**
Alliance Pharmaceutical Co., Ltd
Simanoneua Village, Hadxayfong District, Vientiane, Lao PDR
Tel: +856-21-612 727
www.alliancepharmagroup.com

# ເອກະສານກຳກັບຢາ
# Sodium Chloride 0.9

**ຊື່ທົ່ວໄປ:** Sodium Chloride Injection
**ຊື່ການຄ້າ:** Sodium Chloride 0.9
**ສ່ວນປະກອບ:**
Sodium chloride........................................................................................100ml : 0.9g
**ຂໍ້ບົ່ງໃຊ້:**
- Sodium Chloride 0.9% ແມ່ນໃຊ້ເພື່ອທົດແທນນ້ຳ ແລະ ທາດອີເລັກໂທຣໄລ, ໂດຍສະເພາະໃນເວລາທີ່ສູນເສຍນ້ຳໄປຍ້ອນການຂາດນ້ຳ, ຮາກ, ຖອກທ້ອງ ຫຼື ເຫື່ອອອກຫຼາຍເກີນໄປ.
- ໃຊ້ເພື່ອເຈືອຈາງຢາ ແລະ ລະລາຍຢາຕ່າງໆທີ່ຈະສັກເຂົ້າເສັ້ນເລືອດໃນປະລິມານທີ່ເໝາະສົມ.
- ໃຊ້ເພື່ອລ້າງຮູດັງ, ຕາ ແລະ ລ້າງບາດແຜພາຍນອກ ແລະ ອື່ນໆ.

**ວິທີໃຊ້:**
ໃຊ້ເພື່ອທົດແທນນ້ຳ ແລະ ທາດອີເລັກໂທຣໄລ
- **ສຳລັບຜູ້ໃຫຍ່:**
  - **ປະລິມານຢາເລີ່ມຕົ້ນ:** ໃຫ້ສານນ້ຳທາງເສັ້ນເລືອດ 500ml ຫາ 1,000ml.
  - **ປະລິມານຢາສຳລັບການຮັກສາ:** ໂດຍປົກກະຕິແມ່ນ 1.5 ຫາ 3 ລິດ/ມື້ ຂຶ້ນກັບຄວາມຕ້ອງການນ້ຳຂອງຮ່າງກາຍ.
- **ສຳລັບເດັກນ້ອຍ:**
  - **ປະລິມານຢາສຳລັບການຮັກສາ:** ປະມານ 100ml/kg/ມື້ (ແບ່ງພາຍໃນ 24 ຊົ່ວໂມງ).
  - **ການປັບປະລິມານ:** ໃຫ້ປັບຕາມອາຍຸ, ນ້ຳໜັກ ແລະ ອາການທາງຄລີນິກ.
- **ສຳລັບໃຊ້ເປັນສານລະລາຍ ຫຼື ສານນຳພາສຳລັບສັກຢາເຂົ້າເສັ້ນເລືອດ:**
  - ປະລິມານການໃຊ້ແຕກຕ່າງກັນໄປຕາມຊະນິດຂອງຢາ.
  - ໂດຍທົ່ວໄປແມ່ນໃຊ້ 50ml ຫາ 250ml ເພື່ອລະລາຍຢາເຊັ່ນ: ຢາຕ້ານເຊື້ອ, ຢາເຄມີບຳບັດ ແລະ ອື່ນໆ.
- **ການລ້າງດັງ:**
  - ໃຊ້ເພື່ອລ້າງທຳຄວາມສະອາດໃນຮູດັງ ເວລາເປັນຫວັດ ຫຼື ມີອາການແພ້.
- **ການລ້າງຕາ:**
  - ໃຊ້ 1-2 ຢອດຕາມຄວາມຕ້ອງການ ຫຼື ລ້າງຄ່ອຍໆເປັນເວລາ 2-3 ນາທີ ດ້ວຍການໃຫ້ນ້ຳໄຫຼຕໍ່ເນື່ອງ.
- **ການທຳຄວາມສະອາດບາດແຜພາຍນອກ:**
  - ການລ້າງບາດແຜ: ໃຊ້ຕາມຄວາມຕ້ອງການເພື່ອລ້າງສິ່ງປົນເປື້ອນອອກຈາກບາດແຜ, ບໍ່ມີປະລິມານທີ່ກຳນົດໄວ້ (ຕົວຢ່າງ: ໃຊ້ 50-100ml ຫຼື ຫຼາຍກວ່ານັ້ນ).

**ຂໍ້ຫ້າມໃຊ້:**
- ບໍ່ມີ.

**ຄຳເຕືອນ:**
- ນຳໃຊ້ດ້ວຍຄວາມລະມັດລະວັງ ໃນຄົນເຈັບທີ່ມີອາການບວມນ້ຳ, ຄວາມດັນເລືອດສູງ ແລະ ພາວະຮ່າງກາຍມີທາດໂປຕັດຊຽມໃນເລືອດຕ່ຳ.

**ຜົນຂ້າງຄຽງ:**
- ການສັກສິ່ງຢາຫຼາຍ ແລະ ໄວເກີນໄປ ອາດເຮັດໃຫ້ເກີດມີພາວະອັ່ງນ້ຳ ແລະ ທາດເກືອໂຊດຽມ, ອາການບວມນ້ຳ, ຄວາມດັນ ເລືອດສູງ, ຫົວໃຈເຕັ້ນໄວ, ແໜ້ນໜ້າເອິກ, ຫາຍໃຈຍາກ ແລະ ອາດເຖິງຂັ້ນພາໃຫ້ຫົວໃຈລົ້ມເຫຼວກະທັນຫັນໄດ້.

**ຮູບແບບຂອງຢາ:** ຜະລິດຕະພັນມີລັກສະນະເປັນຂອງແຫຼວ, ໃສ, ບໍ່ມີສີ, ສຳລັບສັກສິ່ງ.
**ຂະໜາດບັນຈຸ:** 1 ແກັດມີ 40 ຖົງ, 1 ຖົງມີ 100ml.
**ວັນໝົດອາຍຸ:** 36 ເດືອນ ຫຼັງຈາກວັນທີຜະລິດ.
**ການເກັບຮັກສາ:**
- ເກັບຮັກສາໄວ້ໃນກ່ອງບັນຈຸເດີມ, ປິດສະໜິດ, ເກັບຮັກສາໄວ້ໃນອຸນຫະພູມຕ່ຳກວ່າ 30°C.

**ຜະລິດໂດຍ:**
ບໍລິສັດ ພັນທະມິດຟາມາຊູຕິຄໍ ຈຳກັດ
ສະຖານທີ່: ບ້ານ ສີມມະໂນເໜືອ, ເມືອງ ຫາດຊາຍຟອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: +856-21-612 727
www.alliancepharmagroup.com